# ໜັງສືແຈ້ງຂ່າວ, ສະບັບທີ 25

## ໂຄງການ ພັດທະນາກະສິກຳສະອາດ

## ເດືອນ ຕຸລາ 2022



ໂຄງການພັດທະນາກະສິກຳສະອາດ ເປັນການຮ່ວມມືດ້ານເຕັກນິກວິຊາການ ໄລຍະເວລາ 5 ປີ (2017-2022) ເຊິ່ງໄດ້ຮັບທຶນຈາກ ອົງການ ຮ່ວມມືສາກົນ ປະເທດຍີ່ປຸ່ນ (ໄຈກ້າ) ໂດຍມີ 4 ແຂວງເປົ້າໝາຍພັດທະນາ (ນະຄອນຫຼວງວຽງຈັນ, ຫຼວງພະບາງ, ໄຊຍະບູລີ ແລະ ຊຽງຂວາງ). ຈຸດປະສົງກໍເພື່ອເປັນການສົ່ງເສີມກະສິກຳສະອາດ ເຊິ່ງກໍຄື ກະສິກຳອິນຊີ ແລະ ກະສິກຳທີ່ດີ (GAP) ໂດຍອີງໃສ່ຄວາມຕ້ອງການຂອງຕະຫຼາດໃນບັນດາແຂວງເປົ້າໝາຍ.

### ກ່າວທັກທາຍໃນວາລະທ້າຍໂຄງການ

ທີ່ປຶກສາ: ທ່ານ ຊາກຸມາ ຮິໂລຢູກິ

ດັ່ງທີ່ທ່ານຊາບ, ໂຄງການພັດທະນາກະສິກຳສະອາດ ຈະສິ້ນສຸດໃນວັນທີ 8 ພະຈິກ 2022. ໃນນາມທີ່ຂ້າພະເຈົ້າໄດ້ຮັບການແຕ່ງຕັ້ງເປັນທີ່ປຶກສາຕັ້ງແຕ່ເດືອນພະຈິກ 2019 ເປັນຕົ້ນມາຈົນເຖິງປະຈຸບັນເປັນເວລາ 3 ປີ. ພາຍຫຼັງຂ້າພະເຈົ້າໄດ້ຮັບການມອບໝາຍນີ້, ໃນເບື້ອງຕົ້ນຂ້າພະເຈົ້າໄດ້ກວດສອບຄວາມຄືບໜ້າຂອງກິດຈະກຳ ແລະ ສັງລວມທິດທາງກິດຈະກຳ ແລະ ແຜນການພື້ນຖານຕັ້ງແຕ່ປີ 2020. ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຊ່ຽວຊານໄຈກ້າ ທັງ 3 ທ່ານຈຶ່ງຈຳເປັນຕ້ອງກັບຄືນ ປະເທດຍີ່ປຸ່ນຊົ່ວຄາວແຕ່ຕົ້ນເດືອນເມສາ ຫາ ເດືອນກັນຍາ 2020. ໃນໄລຍະດັ່ງກ່າວນີ້, ໂຄງການໄດ້ສືບຕໍ່ປະຕິບັດງານຕາມແຜນການກໍຄື ການສ້າງເຮືອນຮົ່ມ ໂດຍໄດ້ຮັບການຮ່ວມມື ແລະ ຊີ້ນຳໂດຍ ສູນມາດຕະຖານກະສິກຳສະອາດ (CASC), ພະແນກກະສິກຳ ແລະ ປ່າໄມ້ແຂວງ (PAFO) ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAFO) ເຊິ່ງໄດ້ສຳເລັດການສ້າງເຮືອນຮົ່ມທັງໝົດ 56 ຫຼັງ.



(ຮູບພາບ) ຢູ່ທີ່ຫ້ອງການ

ຄວາມສຳເລັດດັ່ງກ່າວເປັນຜົນມາຈາກການນຳໃຊ້ປະສົບການຂອງໂຄງການທີ່ໄດ້ດຳເນີນໃນປີທີ່ຜ່ານມາ.

ແນ່ນອນວ່າ ບໍ່ແມ່ນທຸກໆປະສົບການທີ່ຈະນຳໄປສູ່ຜົນສຳເລັດໃນທັນທີ ແລະ ປະສົບການບາງຢ່າງອາດຈະມາພ້ອມກັບຄວາມຍາກລຳບາກ ແລະ ຄວາມລົ້ມເຫລວ. ເຖິງແມ່ນວ່າຄວາມສຳເລັດຂອງໂຄງການຈະມາຈາກການລອງຜິດລອງຖືກ ເນື່ອງຈາກການແຜ່ລະບາດພະຍາດໂຄວິດ-19, ແຕ່ຂ້າພະເຈົ້າຫວັງວ່າ ປະສົບການຕ່າງໆຂອງໂຄງການຈະຖືກນຳໄປໃຊ້ເປັນບົດຮຽນເພື່ອເຮັດກິດຈະກຳອື່ນໆ ແລະ ຂ້າພະເຈົ້າຈະລໍຖ້າຕິດຕາມເບິ່ງການເກີດດອກອອກຜົນແຫ່ງຄວາມສຳເລັດ.

ທ້າຍສຸດນີ້, ຂ້າພະເຈົ້າຂໍອວຍພອນໃຫ້ທ່ານຈົ່ງມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນໜ້າທີ່ການງານ. 🙏🙏 ຂອບໃຈຫຼາຍໆ

### ສະຫຼຸບບັນດາກິດຈະກຳຕ່າງໆ

**ຜົນໄດ້ຮັບ 1 : ຊາວກະສິກອນ/ກຸ່ມຊາວກະສິກອນໃນແຂວງເປົ້າໝາຍໄດ້ຮັບການສ້າງຄວາມເຂັ້ມແຂງໃນການຜະລິດກະສິກຳອິນຊີ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ.**

ຕາມກິດຈະກຳຂອງຜົນໄດ້ຮັບ 1, ພວກເຮົາກໍໄດ້ເຮັດວຽກກ່ຽວກັບການປັບປຸງດ້ານເຕັກນິກການຜະລິດ ແລະ ການເຜີຍແຜ່ ແລະ ການປັບປຸງໂຄງຮ່າງການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານກຸ່ມຂອງຊາວກະສິກອນ.

ໃນໄລຍະການຢ້ຽມຢາມບັນດາແຂວງເປົ້າໝາຍຢູ່ທີ່ ນະຄອນຫຼວງວຽງຈັນ, ແຂວງໄຊຍະບູລີ, ແຂວງຫຼວງພະບາງ ແລະ ແຂວງຊຽງຂວາງ ໄດ້ມີສະພາບການເກີດຂຶ້ນດັ່ງລຸ່ມນີ້:

ສະພາບການທີ 1 ພົບວ່າມີຊ່ອງຢູທູບ (Youtube) ຈຳນວນໜ້ອຍທີ່ເຜີຍແຜ່ຄູ່ມືດ້ານວິຊາການກະສິກຳໃນລາວ. ເມື່ອເວລາທີ່ຊາວກະສິກອນຄົນລາວຕ້ອງການຮຽນຮູ້ເຕັກນິກດ້ານກະສິກຳ, ພວກເຂົາຈະໃຊ້ໂທລະສັບເພື່ອເບິ່ງຊ່ອງຢູທູບ (Youtube) ຂອງປະເທດໄທ ເຊິ່ງເຮັດໃຫ້ມີຄວາມຫຍຸ້ງຍາກຕໍ່ຊາວກະສິກອນຄົນລາວ.

ສະພາບການທີ 2 ພົບວ່າພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAFO) ບໍ່ສາມາດໄປຢ້ຽມຢາມຟາມໄດ້ເທົ່າທີ່ຄວນ ເນື່ອງຈາກຂາດແຄນງົບປະມານ ເຊິ່ງເປັນຂໍ້ຈຳກັດອັນໃຫຍ່ຫຼວງ ຍ້ອນວ່າພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAFO) ມີບົດບາດໃນການເຜີຍແຜ່ເຕັກນິກໃຫ້ຊາວກະສິກອນ.




(ຮູບພາບ) ມອບປຶ້ມຄູ່ມືກະສິກຳຈຳນວນ 100 ຫົວ ເພື່ອເປັນອຸປະກອນການຮຽນໃຫ້ວິທະຍາໄລເຕັກນິກກະສິກຳດົງຄຳຊ້າງ

ພາຍໃຕ້ສະພາບການທີ່ກ່າວມາຂ້າງເທິງນີ້, ເຫັນໄດ້ວ່າມີຄວາມຈຳເປັນຕ້ອງໄດ້ມີວິທີປັບປຸງ ແລະ ເຜີຍແຜ່ເຕັກນິກການປູກຝັງ ແລະ ປັບປຸງໂຄງຮ່າງການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານກຸ່ມຊາວກະສິກອນ. ດັ່ງນັ້ນ, ພວກເຮົາຈຶ່ງໄດ້ສ້າງຄູ່ມືວິດີໂອກ່ຽວກັບ "ຄູ່ມືດ້ານວິຊາການກະສິກຳອິນຊີ" ໂດຍໃຊ້ຊ່ອງຢູທູບ (YouTube) ເປັນພື້ນທີ່ເຜີຍແຜ່ຂໍ້ມູນຕາມຍຸກສະໄໝໃໝ່. ອີງຕາມແນວຄວາມຄິດຂອງ "ສື່ການຮຽນການສອນທີ່ທຸກຄົນສາມາດຮຽນຮູ້ໄດ້ທຸກເວລາ ແລະ ທຸກທີ່" ພວກເຮົາບໍ່ພຽງແຕ່ສາມາດຮັບຊົມໄດ້ເທົ່ານັ້ນ ແຕ່ທຸກໆຄູ່ມືໃນຊ່ອງຢູທູບ (YouTube) ສາມາດດາວໂຫລດ ແລະ ພິມເປັນສະບັບພາສາລາວ ແລະ ພາສາອັງກິດໄດ້.

ນອກຈາກການເຂົ້າຮັບຊົມຄູ່ມືດ້ານເຕັກນິກທີ່ສາມາດເຂົ້າເຖິງຜ່ານທາງອິນເຕີເນັດແລ້ວ, ຄູ່ມືດັ່ງກ່າວຍັງຖືກສ້າງຂຶ້ນໃນຮູບແບບທີ່ສາມາດນຳໃຊ້ໄດ້ໃນທົ່ວປະເທດລາວ ແລະ ອີງການຈັດຕັ້ງກະສິກຳອື່ນໆ.

ດ້ວຍການຮ່ວມມືຂອງກຸ່ມຊາວກະສິກອນອິນຊີ ແລະ ບັນດາຄູ່ຮ່ວມງານ, ພວກເຮົາສາມາດສ້າງຄູ່ມືທັງໝົດ 24 ສະບັບກ່ຽວກັບເຕັກນິກການປູກຝັງ, ການຄຸ້ມຄອງກະສິກຳ, ລະບົບຄວບຄຸມພາຍໃນ (ICS) ແລະ ອື່ນໆກ່ຽວກັບການປູກຝັງອິນຊີ. ເຖິງຢ່າງໃດກໍຕາມ, ພວກເຮົາບໍ່ເຊື່ອວ່າຄວາມຮູ້ ແລະ ເຕັກນິກດັ່ງກ່າວຈະສາມາດເຮັດໃຫ້ເຂົ້າໃຈເລື່ອງເຕັກນິກວິຊາການໃນທັນທີ ເພາະເຕັກນິກເຫຼົ່ານັ້ນເປັນພຽງໜຶ່ງ "ແນວທາງ" ໃນການເຮັດກະສິກຳອິນຊີ. ຂ້າພະເຈົ້າຫວັງວ່າຊາວກະສິກອນຈະນຳເອົາ "ແນວທາງ" ດັ່ງກ່າວນີ້ໄປປະຕິບັດ ແລະ ສ້າງ "ແນວທາງ" ທີ່ດີກວ່າດ້ວຍຕົນເອງໃນອະນາຄົດ.



(ຮູບພາບ) ທ່ານ ຮີໂລນາກະ ເປັນຜູ້ຮັບຜິດຊອບລະບົບຟາມກະສິກຳ

## ຜົນໄດ້ຮັບ 2 : ໄດ້ຮັບການສົ່ງເສີມການຂາຍຜົນຜະລິດກະສິກຳສະອາດໃນແຂວງເປົ້າໝາຍ.

ຕາມກິດຈະກຳຂອງຜົນໄດ້ຮັບ 2, ພວກເຮົາໄດ້ເຮັດວຽກກ່ຽວກັບການເສີມຂະຫຍາຍຊ່ອງທາງການຂາຍໃຫ້ຫຼາກຫຼາຍ, ສ້າງຄວາມເຂັ້ມແຂງໃຫ້ຕະຫຼາດກະສິກຳອິນຊີ ແລະ ເພີ່ມທະວີຄວາມຕ້ອງການຜົນຜະລິດກະສິກຳອິນຊີ. ໃນຕອນທ້າຍຂອງໂຄງການ, ພວກເຮົາຢາກໃຫ້ເຫັນຜົນລວມ ດັ່ງນີ້:

ອີງຕາມການເສີມຂະຫຍາຍຊ່ອງທາງການຂາຍໃຫ້ຫຼາກຫຼາຍ, ເຫັນໄດ້ວ່າຊ່ອງທາງການຂາຍຂອງຊາວກະສິກອນອິນຊີຫຼາຍກວ່າ 90% ແມ່ນຂາຍຢູ່ທີ່ຕະຫຼາດກະສິກຳອິນຊີ. ເຊັ່ນດຽວກັນກັບຊ່ອງທາງການຂາຍອື່ນໆ, ພວກເຮົາໄດ້ເຮັດວຽກເພື່ອພັດທະນາລະບົບຕ່ອງໂສ້ອຸປະທານ ໂດຍຜ່ານການຈັບຄູ່ທຸລະກິດ ເຊິ່ງມີເປົ້າໝາຍເປັນຜູ້ຂາຍຍ່ອຍ, ຜູ້ຈັດຈຳໜ່າຍ ແລະ ໂຮງງານຜະລິດ. ເຖິງແມ່ນວ່າຈະມີຄວາມຫຍຸ້ງຍາກໃນການປະຕິບັດງານ ຍ້ອນວິກິດການແຜ່ລະບາດພະຍາດໂຄວິດ-19, ແຕ່ປະຈຸບັນກໍໄດ້ສືບຕໍ່ດຳເນີນການຄ້າລະຫວ່າງກຸ່ມຊາວກະສິກອນອິນຊີ ແລະ ຕົວແທນຈຳໜ່າຍ (Organic House) ແລະ ໂຮງງານຜະລິດກະແລ້ມ (Ban Ban Ice Cream). ເຖິງແມ່ນວ່າໃນຊ່ອງທາງການຈັບຄູ່ທຸລະກິດຍັງຂາຍໄດ້ໃນປະລິມານບໍ່ຫຼາຍ, ແຕ່ພວກເຮົາເຊື່ອວ່າພວກເຮົາສາມາດສະແດງໃຫ້ເຫັນໄດ້ເຖິງທ່າແຮງຕໍ່ກັບການເສີມຂະຫຍາຍຊ່ອງທາງການຂາຍໃຫ້ຫຼາກຫຼາຍ.

ຕາຕະລາງ: ເຫດຜົນໃນການໄປຕະຫຼາດກະສິກຳອິນຊີ

(ຄັດຈາກການເລືອກ 3 ຄຳຕອບທີ່ເໝາະສົມທີ່ສຸດ)

| | 2021/9 | 2021/2 | 2018/8-10 |
|---|---|---|---|
| ຜົນຜະລິດອິນຊີ | 87% | 71% | 65% |
| ປອດໄພ | 61% | 34% | ບໍ່ມີຄຳຖາມ |
| ສົດໃໝ່ | 61% | 64% | 7% |

ສຳລັບການສ້າງຄວາມເຂັ້ມແຂງໃຫ້ຕະຫຼາດກະສິກຳອິນຊີ, ພວກເຮົາຍັງບໍ່ສັງເກດເຫັນຜົນໄດ້ຮັບໃດໆ. ແຕ່ຢ່າງໃດກໍຕາມ, ຈາກການສຳຫຼວດຕະຫຼາດກະສິກຳອິນຊີໄອເຕັກ 3 ຄັ້ງທີ່ດຳເນີນແຕ່ ເດືອນສິງຫາ 2019 ຫາເດືອນກັນຍາ 2021, ໄດ້ຢືນຢັງວ່າຄວາມຮັບຮູ້ຂອງຜູ້ບໍລິໂພກ ແລະ ການປະເມີນຜະລິດຕະພັນກະສິກຳອິນຊີ (ຜັກ ແລະ ໝາກໄມ້) ເພີ່ມຂຶ້ນ. ຜ່ານການສຳຫຼວດດັ່ງກ່າວນີ້, ເຫັນວ່າຊາວກະສິກອນອິນຊີໄດ້ຮຽນຮູ້ເຖິງຄວາມສຳຄັນຂອງການບໍລິຫານຈັດການບ່ອນຈອດລົດຕະຫຼາດກະສິກຳອິນຊີຢ່າງແທ້ຈິງ, ການຂາຍຜັກໃຫ້ຫຼາກຫຼາຍຊະນິດ ແລະ ການໂຄສະນາປະຊາສຳພັນຜ່ານທາງການເຜີຍແຜ່ໃນຊ່ອງທາງເຄືອຂ່າຍສັງຄົມ (SNS).

ພວກເຮົາບໍ່ສາມາດຈັດກິດຈະກຳຂະໜາດໃຫຍ່ໄດ້ ເພື່ອເພີ່ມທະວີຄວາມຕ້ອງການຜົນຜະລິດກະສິກຳອິນຊີ. ດັ່ງນັ້ນ, ພວກເຮົາຈຶ່ງໄດ້ສ້າງວິດີໂອປະຊາສຳພັນ, ລວມທັງການສຳພາດຊາວກະສິກອນອິນຊີ ແລະ ເຜີຍແຜ່ຜ່ານທາງຊ່ອງທາງເຄືອຂ່າຍສັງຄົມກໍຄື ເຟສບຸກ (Facebook). ເຖິງແມ່ນວ່າຂອບເຂດການປະຕິບັດງານຈະບໍ່ຂະໜາດໃຫຍ່, ແຕ່ພວກເຮົາກໍໄດ້ຈັດກິດຈະກຳຕ່າງໆເຊັ່ນ: ການທົດສອບການຕົກຄ້າງຂອງຢາຂ້າແມງໄມ້ໃນທີ່ສາທາລະນະ ແລະ ການເບິ່ງວິດີໂອ ເຊິ່ງສ່ວນໃຫຍ່ແມ່ນຈັດຢູ່ທີ່ຕະຫຼາດກະສິກຳອິນຊີ.

(ຮູບພາບ) ງານຕະຫຼາດກະສິກຳອິນຊີໄອເຕັກ (ພຶດສະພາ 2022)



ຈັດພິມໂດຍ ໂຄງການ ພັດທະນາກະສິກຳສະອາດ (CADP)
ອີເມລ: cadp.lao.info@gmail.com
ໂທລະສັບ: +856-21 417 681